# NCAPA COVID-19 Resource:

## *Paycheck Protection Program (PPP)*

Updated 5/4/2020
AAPIERN.ORG

ໂຄງການຄຸ້ມຄອງເງິນຄ່າແຮງງານ (PPP) ຫາກໍ່ໄດ້ຮັບເງິນເພີ່ມເຕີມ $310 ພັນລ້ານດອລລາ. ທຸລະກິດຂະໜາດນ້ອຍສາມາດຍື່ນຄໍາຮ້ອງຂໍຢືມເງິນໄດ້, ຊຶ່ງຈະຖືກຍົກໜີ້ໃຫ້ຖ້ານໍາໃຊ້ເພື່ອຮັກສາພະນັກງານໄວ້, ຮວມທັງຈ່າຍເງິນເດືອນ, ຈ່າຍຄ່າລາພັກເຈັບປ່ວຍ, ຮັກສາສຸຂະພາບ, ແລະເພື່ອຮັກສາການດໍາເນີນງານຂອງທຸລະກິດ ເຊັ່ນຄ່າເຊົ່າທີ່, ດອກເບ້ຍເງິນກູ້ຊື້ເຮືອນ, ແລະສາທາລະນຸໂພກ [1]

## ຂໍ້ມູນການກູ້ຢືມ:

- ເຈດຕະນາການກູ້ຢືມເງິນນີ້ແມ່ນເພື່ອໃຊ້ກັບລາຍຈ່າຍຕ່າງໆທີ່ເກີດຂື້ນຕັ້ງແຕ່ວັນທີ 15 ກຸມພາ 2020 ຫາ 30 ມິຖຸນາ 2020.
- ເງິນກູ້ຢືມສູງເຖິງ 2.5 ເທົ່າຂອງຄ່າຈ່າຍແຮງພະນັກງານອີງຕາມປີ 2019 (ສູງເຖິງ $10 ລ້ານດອລລາ), ຫຼືອັນໃດທີ່ໜ້ອຍກວ່າ
- ເງິນກູ້ຢືມນີ້ສາມາດຍົກໜີ້ໃຫ້ຖ້າຫາກນໍາໃຊ້ຢ່າງໜ້ອຍ 75% ຂອງຈໍານວນເງິນເພື່ອເປັນຄ່າແຮງງານພາຍໃນ 8 ອາທິດ
- ບໍ່ດັ່ງນັ້ນ ເງິນກູ້ຢືມນີ້ຈະມີດອກເບ້ຍໃນອັຕຣາ 1%
- ການຈ່າຍເງິນກູ້ເງິນຢືມຄືນຈະເລີ່ມຕົ້ນຂື້ນ 6 ເດືອນ ຫຼັງຈາກທີ່ໄດ້ຮັບອະນຸມັດ ແລະຈະຕ້ອງຈ່າຍຄືນພາຍໃນ 2 ປີ [2]

## ການມີສິດ [3]:

- ທຸລະກິດຂະໜາດນ້ອຍທີ່ມີຄົນງານ 500 ຄົນ ຫຼືຕໍ່າກວ່າ --ຮວມທັງອົງການທີ່ບໍ່ຫວັງຜົນກໍາໄລ (501 (c )(3) ເທົ່ານັ້ນ), ອົງການນັກຮົບເກົ່າ, ບັນຫາຊົນເຜົ່າ, ບຸກຄົນທີ່ເປັນນາຍຈ້າງຕົນເອງ, ເຈົ້າຂອງກິດຈະການຜູ້ດຽວ, ແລະຜູ້ຮັບເໝົາອິດສະຣະ.
- ທຸລະກິດທີ່ມີຄົນງານຫຼາຍກວ່າ 500 ຄົນມີສິດໃນບາງອຸດສາຫະກໍາ

## ຂັ້ນຕອນຕໍ່ໄປ:

- ຍື່ນຄໍາຮ້ອງຂໍຢືມເງິນ PPP ໄປຫາຜູ້ໃຫ້ກູ້ຢືມທີ່ໄດ້ຮັບອະນຸຍາດຈາກອົງການບໍລິຫານທຸລະກິດຂະໜາດນ້ອຍ (SBA). ຈົ່ງໃຫ້ແນ່ໃຈວ່າທ່ານໄດ້ສົ່ງໄປໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້, ເພາະວ່າເງິນໃນໂຄງການນີ້ມີຈໍານວນຈໍາກັດ
- ຊອກຫາຜູ້ໃຫ້ກູ້ຢືມທີ່ໄດ້ຮັບອະນຸຍາດແລ້ວຈາກທີ່ນີ້: **https://www.sba.gov/paycheckprotection/find**
- ແບບຟອຣົມຂໍຢືມເງິນ:

  **https://www.sba.gov/sites/default/files/2020-04/PPP-Borrower-Application-Form-Fillable.pdf**

- **ໃຫ້ຣະວັງການສໍ້ໂກງ!** ໃຫ້ປຶກສາຜູ້ໃຫ້ກູ້ຢືມເງິນໃນທ້ອງຖິ່ນວ່າເຂົາເຈົ້າໄດ້ເຂົ້າຮ່ວມນໍາຫຼືບໍ່. ການກູ້ຢືມທຸກຢ່າງມີເງື່ອນໄຂແບບດຽວກັນບໍ່ວ່າຈະເປັນຜູ້ໃຫ້ກູ້ຢືມ ຫຼືຜູ້ກູ້ຢືມ. [4]

COVID-19 TASKFORCE

Source:
[1] https://www.searac.org/covid-19-resources/covid-19-federal-stimulus-bill-faqs/#payments
[2] https://sites.google.com/view/covidresources-hmong/english?authuser=0#h.yvntj46keume
[3] https://home.treasury.gov/system/files/136/PPP%20--%20Overview.pdf
[4] https://home.treasury.gov/system/files/136/PPP%20--%20Overview.pdf